# ໂຮງຮຽນວັນອາທິດ

**ວັນອາທິດ ທີ 1 ພຶສຈິກາ 2009 (11-1-2009)**

---

## ດຳລົງຊີວິດຢູ່ໃນຄວາມເຊື່ອ

**ຂໍ້ພຣະຄັມພີໃນບົດຮຽນ:** ຢາໂກໂບ:1:19-25;2:14,18-26

**ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?**

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ເຂົ້າໃຈວ່າການອົດທົນຮັກສາຄວາມເຊື່ອເປັນຜົນສະທ້ອນທີ່ດີໃຫ້ກັບການດຳລົງຊີວິດທີ່ຍອມເຊື່ອຟັງແລະຢັ້ງຢືນຢັນວ່າທ່ານໄດ້ພິສູດໃຫ້ເຫັນຄວາມເຊື່ອຂອງທ່ານໃນການດຳລົງຊີວິດໃນແຕ່ລະວັນ.

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ:**

ບົດຮຽນນີ້ແມ່ນເວົ້າເຖິງຄວາມສັມພັນລະຫວ່າງຄວາມເຊື່ອແລະການເຊື່ອຟັງຄວາມ. ອັນເປັນພື້ນຖານໃນການກວດສອບທີ່ຍອມຮັບຊື່ກັນແລະກັນຂອງຄຣິສຕຽນ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:**

ຄຣິສຕຽນຫຼາຍໆທ່ານບໍ່ຍອມໃຫ້ຄວາມເຊື່ອຂອງເຂົາເຂົ້າສນິດແໜ້ນໃນພຣະຄຣິດ ໃນການໃຊ້ຊີວິດຂອງເຂົາ. ເຂົາແບ່ງແຍກຊີວິດຂອງເຂົາອອກແລະບໍ່ພົວພັນກັບກຸ່ມຄຣິສຕຽນທີ່ຍຶດໝັ້ນໃນພຣະຄຳຂອງພຣະເຈົ້າຊຶ່ງສອດຄ້ອງກັນກັບພຣະຄັມພີຢາໂກໂບ, ເຖິງຢ່າງໃດກໍຕາມ, ຄວາມເຊື່ອທີ່ແທ້ຈິງກໍເຕັມໄປດ້ວຍຄວາມເຕັມໃຈ.

ນາງນ້ອຍ ມີຄວາມເສັຽໃຈເພາະວ່າອ້າຍຂອງລາວໄດ້ຕັ້ງກັບດັກຈັບເອົານົກ. ລາວໄດ້ບອກພໍ່ວ່າ, **"ຂະນ້ອຍໄດ້ອະທິຖານວ່າ ຂໍຢ່າໃຫ້ກັບດັກນັ້ນຈັບນົກໄດ້ເດີ."** ພໍ່ຂອງລາວໄດ້ຖາມວ່າ,**"ເຈົ້າໄດ້ເຮັດຫັຍງອີກແດ່ນອກຈາກນີ້?"** ລາວໄດ້ຕອບວ່າ, **"ເອີ,ຂະນ້ອຍໄດ້ອອກໄປທຳລາຍກັບດັກນັ້ນໃຫ້ມຸ່ນເປັນຊິ້ນໆ."** ຕາມພຣະຄັມພີຢາໂກໂບນາງນ້ອຍຜູ້ນີ້ຄວນໄດ້ຮັບການສັຣເສີນຍ້ອງຍໍໃນການນຳເອົາຄວາມເຊື່ອຂອງລາວເຂົ້າໃນການປະຕິບັດໝືອນດັ່ງບົດຮຽນໄດ້ສອນ.

### ສຶກສາພຣະຄັມພີ

**1. ຍອມຮັບເອົາພຣະຄຳທີ່ປູກຝັງໄວ້.** ຢາໂກໂບ 1:19-21

ສຳລັບທ່ານ ທີ່ຍອມຮັບເອົາຂໍ້ພຣະທັມທີ່ສຳຄັນ ຄຳສັ່ງຂອງພຣະເຈົ້າອັນທຳອິດຂອງຄຣິສຕຽນ ຈົ່ງວ່ອງໄວໃນການຟັງ, ຈົ່ງຊັກຊ້າໃນການເວົ້າ ນີ້ບໍ່ໄດ້ໝາຍເຖິງການນິ້ງຢູ່ບໍ່ເວົ້າບໍ່ຈາຫຍັງເລີຍແຕ່ ມີຄວາມໝາຍວ່າໃຫ້ເຮົາລະມັດລະວັງໃນການເວົ້າຈາຂອງເຮົາ. ການເວົ້າຈາໂດຍຂາດການຢັ້ງຄິດມັກກໍ່ໃຫ້ເກີດການຜິດພາດໂດຍບໍ່ຄຳນຶງວ່າຈະມີຫຍັງເກີດຂຶ້ນ, ມັນມີຂຶ້ນໃນການໂຕ້ຖຽງກັນລະຫວ່າງສາມີແລະພັລະຍາຫຼືຜູ້ທີ່ມີຄວາມຄິດເຫັນວ່າຕົນເປັນຜູ້ທີ່ຖືກຕ້ອງສເມີ ໂຕ້ຖຽງກັບຜູ້ທຳໜ້າທີ່ຕັດສິນຄວາມຂອງການທະເລາະວິວາດ, ດັ່ງນັ້ນເປັນຄວາມຕ້ອງການຢ່າງຍິ່ງສຳລັບພວກເຮົາທີ່ຈະຮຽນເອົາໃຫ້ເປັນ **ຜູ້ຊັກຊ້າໃນການປາກເວົ້າ, ແລະກໍຊັກຊ້າໃນການໂກດຮ້າຍ**

ພຣະຄັມພີໄດ້ເຕືອນສະຕິພວກເຮົາ **"ຢ່າໂກດຮ້າຍແລະຢ່າເຮັດບາບ"** (ເອເຟໂຊ 4:26). ດ້ວຍເຫດໃດ? ເພາະວ່າການເປັນຄົນໂກດຮ້າຍບໍ່ໄດ້ເປັນຜົນສຳເຣັດໃນຄວາມຊອບທັມຂອງພຣະເຈົ້າ. ການທີ່ຂາດການຄວບຄຸມສະ

ຕິອາລົມກໍເປັນການຊັກນໍາເຂົ້າໄປສູ່ການຜິດຖຽງກັນ(ສຸພາສິດ 29:22)ເປັນອຸປະສັກໃນການອ້ອນວອນອະທິຖານ(1 ຕິໂມທຽວ2:8), ແລະຍັງເປັນຈຸດຊັກນໍາແນວຄິດຈິດໃຈທີ່ໂຫດຮ້າຍເຂົ້າມາສູ່ຊີວິດເຮົາ(ເອເຟໂຊ 4:26-27) ມີຫຼາຍໆຄົນໄດ້ທໍາລາຍຊີວິດຂອງຕົນເອງໃນເວລາອັນສັ້ນໆດ້ວຍໃຈໂກດຮ້າຍ. ອາລົມຂອງໂມເຊເປັນເຫດຂັດຂວາງເພິ່ນບໍ່ໃຫ້ໄດ້ເຂົ້າໄປໃນແຜ່ນດິນພັນທະສັນຍາຂອງພຣະເຈົ້າ(ຈົດເຊັນບັນຊີ 20:10-12).

ຢາໂກໂບໄດ້ຊັກຊວນໃຫ້ຄຣິສຕຽນໄດ້ແຍກຕົວອອກຈາກຄວາມຊົ່ວມົວໝອງທຸກຢ່າງ. ພວກເຮົາຕ້ອງສາຣະພາບຄວາມຜິດແລະກໍາຈັດຄວາມບາບ ພວກເຮົາສາມາດເຮັດໄດ້ໂດຍການຖ່ອມໃຈລົງຕ້ອນຮັບເອົາພຣະທັມຄໍາສອນເຂົ້າປູກຝັງໄວ້ພາຍໃນຈິດໃຈຂອງເຮົາ. ຄວາມບາບເປັນສິ່ງກີດຂວາງບໍ່ໃຫ້ພຣະທັມທີ່ປູກຝັງໄວ້ນັ້ນຈະເຣີນຂຶ້ນໃນຈິດວິນຍານຂອງເຮົາ.

ບາງຄົນໄດ້ພິກປີ້ນຄວາມຈິງຂອງພຣະທັມຢາໂກໂບຄິດວ່າຄວາມພົ້ນແມ່ນໄດ້ມາດ້ວຍການປະຕິບັດແທນທີ່ຈະໄດ້ມາດ້ວຍທາງຄວາມເຊື່ອ. ໃນຢາໂກໂບ 1:21 ພວກເຮົາໄດ້ຮັບການຊົງຊໍາຣະລ້າງໃຫ້ໄດ້ຮັບຄວາມພົ້ນດ້ວຍທາງຄວາມເຊື່ອ, ເມື່ອທ່ານໄດ້ບອກພວກເຮົາຈົ່ງຖ່ອມໃຈລົງຮັບເອົາພຣະທັມຄໍາສອນເຂົ້າສູ່ຈິດໃຈ, ແມ່ນສິ່ງໃດທີ່ສາມາດຊ່ວຍທ່ານໃຫ້ພົ້ນໄດ້. ຄວາມຈິງ, ໃນປໂຍກຂ້າງເທິງນັ້ນສາມາດອະທິບາຍວ່າ "ຊ່ວຍຈິດວິນຍານຂອງທ່ານໃຫ້ພົ້ນ" ພຣະຄໍານີ້ເປັນຄໍາສັ່ງສອນຂອງອົງພຣະເຢຊູຄຣິດ."ພຣະທັມແຫ່ງຄວາມຈິງ" ຢາໂກໂບ 1:18.

**2. <u>ການຂັບຕາມພຣະທັມ</u>**: ຢາໂກໂບ 1:22-25

ບຸກຄົນທີ່ຄິດວ່າຕົນເປັນຄຣິສຕຽນຍ້ອນວ່າຕົນໄດ້ໄປໂບດ, ແລະໄດ້ຟັງຄໍາເທສນາເທົ່ານັ້ນ ຜູ້ນັ້ນກໍເປັນຄົນຫຼອກລວງຕົນເອງ. ຢາໂກໂບໄດ້ກ່າວວ່າຈົ່ງເປັນຜູ້ປະຕິບັດຕາມທຸກຖ້ອຍຄໍາຂອງພຣະເຈົ້າແລະບໍ່ເປັນແຕ່ຜູ້ຟັງຢ່າງດຽວ. ເປັນຫຍັງ?ເພາະວ່າຜູ້ບໍ່ປະພຶດຕາມກໍຄືບຸກຄົນທີ່ເບິ່ງເງົາຕົວເອງຢູ່ໃນແວ່ນເທົ່ານັ້ນ. ໃນສັດຕະວັດທີນຶ່ງເພິ່ນເຮັດແວ່ນດ້ວຍວິທີການຂັດແຜ່ນໂລຫະໃຫ້ເຫຼື້ອມໆແລະມັນກໍເປັນພຽງເງົາເທົ່ານັ້ນ(1ໂກຣິນໂທ13:12)ເມື່ອເຮົາຍ່າງອອກຈາກແວ່ນ ເຮົາກໍລືມເລີຍວ່າເຮົາເປັນຄົນຢ່າງໃດ. ຢາໂກໂບໄດ້ສົມທຽບຜູ້ທີ່ຟັງພຣະທັມຂອງພຣະເຈົ້າແລ້ວບໍ່ປະຕິບັດຕາມວ່າເປັນຄົນໂງ່ ເພາະຄືກັບຜູ້ທີ່ແຍງແວ່ນແລ້ວລືມວ່າຕົນເປັນຢ່າງໃດ.

ຢາໂກໂບໄດ້ສນັບສນູນທ່າທີ່ໃນທາງບວກຕໍ່ພຣະບັນຍັດຄືລາວໄດ້ເອີ້ນວ່າ ພຣະບັນຍັດທີ່ໃຫ້ມີເສຣີພາບຊຶ່ງແຕກຕ່າງຈາກອັກຄະສາວົກໂປໂລທີ່ໄດ້ເອີ້ນພຣະບັນຍັດວ່າເປັນກົດແຫ່ງຄວາມພະຍາຍາມກະທໍາເພື່ອຈະໄດ້ຄວາມລອດພົ້ນ (ໂຣມ6:14) ຢາໂກໂບໄດ້ໃຊ້ຄໍາວ່າພຣະບັນຍັດນັ້ນໝາຍເຖິງພຣະຄໍາຂອງພຣະເຈົ້າ.

ພຣະບັນຍັດ(ກົດໝາຍ)ຂອງພຣະເຈົ້າຖືກຕ້ອງ (ເພັງສັຣເສີນ19:7) ເມື່ອພຣະທັມອັນຖືກຕ້ອງຂອງພຣະເຈົ້າສະແດງຄວາມຜິດຂອງພວກເຮົາໃຫ້ພວກເຮົາເຫັນ, ຄວາມທັນປ່ຽນຂອງທັມມະຊາດຂອງຄວາມຜິດບາບຖືກຍົກເລີກນັ້ນແມ່ນສ່ວນນຶ່ງຂອງພຣະທັມ. ແຕ່ພວກເຮົາຄວນດັດແປງຊີວິດຂອງພວກເຮົາໃຫ້ເຂົ້າກັບຄວາມໄວ້ວາງໃຈໃນພຣະເຈົ້າແລະເຊື່ອຟັງແທ້ໆ. ມີຫຼັງຕື່ມອີກ, ພຣະທັມຍັງໃຫ້ເສຣີພາບ(ເພັງສັຣເສີນ119:45)ເວົ້າວ່າ, ຂ້າພຣະອົງຈະເດີນຢ່າງເສຣີໃນບ່ອນກວ້າງໃຫຍ່ເພາະຂ້າພຣະອົງຊອກສແວງຫາຂໍ້ບັງຄັບຂອງພຣະອົງ

ພຣະບັນຍັດ(ກົດໝາຍ)ໄດ້ໃຫ້ຂອບເຂດທີ່ມີຄວາມປອດພັຍແລະເສຣີພາບໃນຂອບເຂດຂອງມັນ. ຂ້າພະເຈົ້າເຄີຍໄດ້ໄປທ່ຽວພູເຂົາພະຍຸໃກ້ກັບຣັດແອັດແລັນຕາ. ເມື່ອຂ້າພຣະເຈົ້າໄດ້ສໍາຜັດກັບລົມເຖິງໂງ່ນຫີນໃຫຍ່ແຂງ ຂ້າພຣະເຈົ້າຢ້ານທີ່ຈະຍ່າງໄປໃກໄດ້. ແລ້ວຂ້າພຣະເຈົ້າໄດ້ສັງເກດເຫັນວ່າ ມີຮົ້ວທີ່ສູງທີ່ສາມາດປ້ອງກັນນັກທ່ອງທ່ຽວບໍ່ໃຫ້ຕົກລົງໃນເຫວເລິກນັ້ນ. ຈາກການເຫັດຮົ້ວນັ້ນໄດ້ເຮັດໃຫ້ຂ້າພຣະເຈົ້າຮູ້ສຶກວ່າມີເສຣີພາບຂຶ້ນໃນການທີ່ຈະຍ່າງໄປມາໃນອ້ອມແອ້ມຂອບເຂດບໍຣິເວນນັ້ນ ກົດໝາຍຂອງພຣະເຈົ້າກໍໃຫ້ເສຣີພາບຄ້າຍຄືຢ່າງນັ້ນແຫຼະ..

**3. <u>ຄວາມເຊື່ອທີ່ຖືກຕ້ອງ</u>** ຢາໂກໂບ 2:14,18-26

ມີບາງຄົນເຫັນຂໍ້ແຕກຕ່າງລະຫ່ວາງ ຢາໂກໂບ 2:24 ແລະໂຣມ 3:28 "ເພາະສະນັ້ນເຮົາຈຶ່ງສລຸບວ່າຄົນເຮົາຊື່ສັດດ້ວຍຄວາມເຊື່ອກໍເປັນພາກສ່ວນນຶ່ງມາຈາກການປະຕິບັດພຣະບັນຍັດ."ເຖິງຢ່າງໃດກໍຕາມ ມັນບໍ່ໄດ້ເປັນລັກສະນະຂໍ້ຂັດແຍ້ງກັນ; ມັນເປັນການສະທ້ອນພາບໃຫ້ເຫັນທັງສອງຂ້າງກົງກັນທີ່ຢູ່ໃນລຽນດຽວ. ທ່ານໂປໂລໄດ້ເນັ້ນໜັກເຖິງຄວາມເຊື່ອທີ່ໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າ; ຢາໂກໂບກໍເນັ້ນໜັກເຣື່ອງຄວາມເຊື່ອທີ່ມີການປະຕິບັດທີ່ສະແດງໃຫ້ເຫັນເຖິງຄວາມພົ້ນຕລອດການປະຕິບັດທີ່ຖືກຕ້ອງ. ຢາໂກໂບບໍ່ໄດ້ຕໍ່ວ່າເຖິງເຣື່ອງຄວາມພົ້ນທີ່ໄດ້ມາດ້ວຍທາງຄວາມເຊື່ອ. ທ່ານຕໍ່ວ່າໃນແນວຄວາມຄິດຂອງບຸກຄົນທີ່ປະຕິເສດຄວາມເຊື່ອອອກຈາກການປະຕິບັດ. ດ້ວຍເຫດນີ້ ຢາໂກໂບເວົ້າຊໍ້າອີກວ່າ ຄວາມເຊື່ອທີ່ຂາດການປະຕິບັດ(ຢາໂກໂບ 2:17-26) ກໍຄືຄວາມເຊື່ອທີ່ຕາຍແລ້ວ.

ແມ່ນຫຍັງເປັນສິ່ງທີ່ດີ, ຢາໂກໂບໄດ້ຖາມ, ຖ້າຫາກວ່າມີຄົນໆນຶ່ງຫາກເວົ້າວ່າລາວມີຄວາມເຊື່ອ, ແຕ່ລາວບໍ່ມີການປະຕິບັດອັນໃດທັງສິ້ນ? ຢາໂກໂບໄດ້ເວົ້າຢ່າງມີຄວາມໝາຍວ່າບໍ່ມີຂໍ້ຢືນຢັນເຖິງຄວາມເຊື່ອໃດທີ່ມີຄວາມໝາຍຖ້າຫາກວ່າຂາດຈາກການປະຕິບັດ. ຢາໂກໂບໄດ້ຖາມອີກວ່າ ຄວາມເຊື່ອຂອງລາວສາມາດຊ່ວຍລາວບໍ່? ຢາໂກໂບບໍ່ຕ້ອງການໃຫ້ຄຳຕອບໂດຍມີຂໍ້ສົງສັຍວ່າຄວາມເຊື່ອສາມາດຊ່ວຍຄົນນັ້ນໄດ້, ເພິ່ນໄດ້ຖາມຕື່ມອີກ "ຄວາມເຊື່ອນັ້ນສາມາດ (ຄວາມເຊື່ອທີ່ບໍ່ມີການປະຕິບັດ)ຊ່ວຍລາວບໍ່? ຄຳຕອບຂອງຢາໂກໂບວ່າບໍ່ໄດ້ເປັນເດັດຂາດ.

ໃນຂໍ້15-17 ທ່ານໃຫ້ຄຳອະທິບາຍວ່າຖ້າທ່ານຜູ້ໃດຜູ້ນຶ່ງພົບເຫັນອ້າຍນ້ອງຍິງຊາຍຂອງຕົນທີ່ມີຄວາມຂັດສົນແລະມີຄວາມຕ້ອງການ, ແຕ່ວ່າບໍ່ໄດ້ໃຫ້ສິ່ງຂອງອັນທີ່ເປັນຄວາມຕ້ອງການແກ່ເຂົາເລີຍ. ນີ້ເປັນຕົວຢ່າງທີ່ສະແດງໃຫ້ເຂົ້າໃຈ ຢາໂກໂບຍັງຊີ້ໃຫ້ເຫັນວ່ານັ້ນຄື: ຄວາມເຊື່ອທີ່ຂາດການປະຕິບັດ.

ໃນຂໍ້ 18 ທ່ານໄດ້ໃຫ້ຄຳແນະນຳຄວາມຄິດເຫັນທີ່ໂຕ້ແຍ້ງກັນ ແຕ່ບາງຄົນຈະເວົ້າວ່າ "ເຈົ້າມີຄວາມເຊື່ອ ແຕ່ຝ່າຍຂ້ອຍມີການປະຕິບັດ " ຄຳຖາມທີ່ໂຕ້ແຍ້ງ" ທັງສອງຢ່າງຄວາມເຊື່ອແລະການປະຕິບັດນັ້ນມີເຫດຜົນທີ່ເຊື່ອແຕກຕ່າງກັນຕາມແບບຂອງໃຜມັນບໍ? ຢາໂກໂບໂຕ້ຕອບຢ່າງໜັກແໜ້ນວ່າ "ບໍ່!" ທ່ານທ້າທາຍວ່າ ຈົ່ງສະແດງໃຫ້ເຮົາເຫັນຄວາມເຊື່ອຂອງເຈົ້າຊຶ່ງບໍ່ມີການປະຕິບັດ ແລະຝາຍເຮົາຈະສະແດງຄວາມເຊື່ອຂອງເຮົາດ້ວຍການປະຕິບັດ. ຕໍ່ບຸກຄົນຜູ້ທີ່ຄິດວ່າຄວາມເຊື່ອແມ່ນສະຕິປັນຍາທີ່ອອກມາຈາກຄຳສັ່ງສອນທາງສາສນາ, ທ່ານຢາໂກໂບໄດ້ໃຊ້ຫຼັກຄຳສອນຂອງພວກຢິວເປັນການເຕືອນໃຈໃນແຕ່ລະວັນ (ພຣະບັນຍັດ 6:4) ເຈົ້າເຊື່ອວ່າມີແຕ່ພຣະເຈົ້າອົງດຽວກໍດີແລ້ວ.

ແຕ່ຜູ້ທີ່ຄິດວ່າຕົນເປັນຜູ້ສລາດບໍ່ຍອມຮັບສະພາບຄວາມເປັນຈິງເພາະວ່າຄົນທີ່ມີໃຈຫຍາບຊ້າເຂົາກໍຄິດຢູ່ແຕ່ໃນທາງຂອງເຂົາ. ທ່ານໄດ້ຍົກຕົວຢ່າງໃຫ້ເຫັນເຊັ່ນ ອັບຣາຮາມແລະບັນພຣະບຸຣຸດຂອງເຂົາ ທີ່ໄດ້ສະແດງຄວາມເຊື່ອທີ່ປະກອບດ້ວຍການປະຕິບັດ(ປະຖົມມະການ 15:6;ໂຣມ4:3)ຢາໂກໂບບໍ່ໄດ້ຂັດແຍ່ງກັບທ່ານໂປໂລທີ່ວ່າອັບຣາຮາມໄດ້ຮັບຄວາມພົ້ນໂດຍທາງຄວາມເຊື່ອ; ຢາໂກໂບເວົ້າວ່າທ່ານເປັນບິດາແຫ່ງຄວາມເຊື່ອ. ທ່ານມີການປະຕິບັດຄຽງຄູ່ໄປກັບຄວາມເຊື່ອແລະດ້ວຍການປະຕິບັດນັ້ນຄວາມເຊື່ອຈຶ່ງເປັນທີ່ສຳເຣັດ. ອັບຣາຮາມບໍ່ພຽງແຕ່ວ່າທ່ານເປັນຕົວຢ່າງອັນດີໃນດ້ານຄວາມເຊື່ອ, ທ່ານຍັງເປັນຜູ້ປະຕິບັດຕາມຄວາມເຊື່ອຂອງທ່ານ. ໃນທຳນອງນີ້ອາດມີບາງຄົນຈະເວົ້າວ່າ "ເຂົາບໍ່ມີຄວາມເຊື່ອໃນຂັ້ນມາດຕະຖານຂນາດເປັນຮີໂຣເໝືອນຢ່າງອັບຣາຮາມ" ຢາໂກໂບ ຍັງມີຕົວຢ່າງທີ່ໜ້າຍົກຍ້ອງເຊັ່ນວ່າຍິງໂສເພນີຜູ້ນຶ່ງທີ່ຊ່ອຍເຫຼືອຜູ້ສອດແນມທີ່ໂຢຊວຍໄດ້ສົ່ງໄປ ລາວກໍມີຊື່ເປັນຮີໂຣໃນປຶ້ມບັນທຶກ "ຊື່ສັດໃນຄວາມເຊື່ອ" (ເຮັບເຣີ 11:31) ແລະຢາໂກໂບກໍສະແດງອອກໃຫ້ເຮົາເຫັນວ່ານາງໄດ້ສະແດງຕົວເປັນຜູ້ບໍຣິສຸດດ້ວຍການກະທຳ.

ໂປໂລໃຊ້ຄຳວ່າບໍຣິສຸດໝາຍເຖິງການໄດ້ຮັບຄວາມລອດພົ້ນ. ຢາໂກໂບໃຊ້ຄຳວ່າບໍຣິສຸດໝາຍເຖິງການສະແດງໃຫ້ເຫັນເຖິງຄວາມລອດພົ້ນ. ໂປໂລໃຊ້ຄຳວ່າປະຕິບັດມີຄວາມໝາຍວ່າເປັນຄວາມຕ້ອງການ ທີ່ປາດຖນາທີ່ຈະຮັບຄວາມພົ້ນ. ຢາໂກໂບໃຊ້ຄຳວ່າປະຕິບັດມີຄວາມໝາຍວ່າເປັນຄວາມຕ້ອງການທີ່ຈະສະແດງອອກໃຫ້ເຫັນເຖິງຄວາມເຊື່ອ, ເຖິງຢ່າງໃດກໍຕາມ, ຢາໂກໂບ 2:24 ກໍບໍ່ໄດ້ມີຂໍ້ໂຕ້ແຍ້ງກັບ ໂຣມ3:28 ແຕ່ຢ່າງໃດເລີຍ. ໂປໂລ ເວົ້າວ່າຂໍແຕ່ໃຫ້ມີຄວາມເຊື່ອກໍສາມາດທີ່ຈະເປັນຄຣິສຕຽນໄດ້.

ຢາໂກໂບໄດ້ເວົ້າວ່າມີແຕ່ຄວາມເຊື່ອຢ່າງດຽວນັ້ນບໍ່ພຽງພໍ,    ຕ້ອງມີຄວາມເຊື່ອຟັງແລະຄວາມເຊື່ອທີ່ປະກອບດ້ວຍການປະຕິບັດຈິງຈະສະແດງອອກໃຫ້ເຫັນເຖິງຊີວິດຂອງຄຣິສຕຽນນັ້ນ.    ຢາໂກໂບໄດ້ສລູບຂໍ້ໂຕ້ຖຽງຂອງເພິ່ນດ້ວຍການສົມທຽບກັບສົບຄົນຕາຍ ຄົນຢິວທີ່ບໍຣິສຸດເປັນຜູ້ທີ່ບໍ່ເຄີຍແຕະຕ້ອງສົບຄົນຕາຍ,ຫຼືເຂົາບໍ່ເປັນຄົນທີ່ສົກກະປົກ. ນອກຈາກນັ້ນ, ຢາໂກໂບເວົ້າວ່າ ພວກເຮົາຄວນທີ່ຈະຫຼີກເວັ້ນຈາກຄວາມເຊື່ອທີ່ຕາຍແລ້ວທີ່ເປັນການແຍກອອກຈາກການປະຕິບັດການດີ. ເຊັ່ນດຽວກັນກັບຮ່າງກາຍທີ່ຂາດຈິດວິນຍານກໍຕາຍແລ້ວ ດັ່ງນັ້ນຄວາມເຊື່ອທີ່ຂາດການປະຕິບັດກໍຕາຍແລ້ວເຊັ່ນກັນ.

## ບົດຮຽນແຫ່ງຊີວິດ.

ຄວາມຈິງຄວາມເຊື່ອຂອງຄຣິສຕຽນແມ່ນເກີດຂຶ້ນຢູ່ຝ່າຍຈິດໃຈ,ໄດ້ຮັບການທົດສິງດ້ວຍຖ້ອຍຄຳຂອງພຣະເຈົ້າ ແລະຈະເຣີນຂຶ້ນໃນການເກີດຜົນດີ. ການທຳໜ້າທີ່ວຽກງານທີ່ດີເປັນຫຼັກຖານທີ່ສະແດງອອກພາຍນອກທີ່ຊີ້ໃຫ້ເຫັນເຖິງຄວາມເຊື່ອທີ່ອອກມາຈາກພາຍໃນຈິດໃຈ. ເຮົາບໍ່ສາມາດຈະແຍກການປະຕິບັດອອກຈາກຄວາມເຊື່ອອັນແທ້ຈິງໄດ້ດັ່ງເຊັ່ນຮ່າງກາຍຂອງເຮົາຈະບໍ່ມີຊີວິດຢູ່ໄດ້ຖ້າຂາດລົມຫາຍໃຈ.

- ❖ ຄິດເບິ່ງໃນລະຍະປີນີ່ງຜ່ານມາແລະຄິດເບິ່ງວ່າທ່ານເຄີຍຄຸ້ນເຄືອງຈິດໃຈກັບໃຜຜູ້ນຶ່ງບໍ່. ດ້ວຍເຣື່ອງວາຈາຫຼືດ້ວຍການໃຫ້ການຊ່ວຍເຫຼືອ? ທ່ານແກ້ໄຂດ້ວຍວິທີໃດເພື່ອເຮັດໃຫ້ຖືກຕ້ອງ?
- ❖ ທ່ານໄດ້ຮຽນເອົາພຣະທັມຄຳສອນຂອງພຣະເຈົ້າດ້ວຍວິທີທາງໃດເພື່ອໃຫ້ເກີດຜົນໃນຊີວິດຂອງທ່ານ? ແມ່ນວິທີທາງຢ່າງໃດທີ່ເຮັດໃຫ້ທ່ານເກີດຜົນ,  ການຟັງຄຳເທດສນາຫຼືການອ່ານພຣະຄັມພີ?
- ❖ ໃນທາງໃດແດ່ທີ່ທ່ານເຫັນວ່າຄວາມເຊື່ອຄຣິສຕຽນຂອງທ່ານມີຊີວິດ(ບໍ່ຕາຍ)  ການປະກາດຂ່າວປະເສີດແລະການຮັບໃຊ້ແບບໃດທີ່ທ່ານມີສ່ວນຮ່ວມ?

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** www.lsbf.org **ໂດຍ LLBC.**